# ຄມສ ເປີດຮັບບົດ ແຂ່ງຂັນກ່ຽວກັບ ແມ່ນ້ຳຂອງ

✺ ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ເປີດຮັບການແຂ່ງຂັນບົດເລື່ອງລະດັບພູມີພາກ ພາຍໃຕ້ຫົວຂໍ້ "ແມ່ນ້ຳຂອງມີຄວາມໝາຍຕໍ່ທ່ານແນວໃດ?" ໂດຍບໍ່ຈຳກັດອາຍຸໃນບັນດາປະເທດພາກພື້ນລຸ່ມແມ່ນ້ຳຂອງເຊັ່ນ:ລາວ, ໄທ, ກຳປູເຈຍ ແລະຫວຽດນາມ.

ອີງຕາມຂໍ້ມູນຈາກຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ຮູ້ວ່າ: ຈຸດປະສົງຂອງການຈັດການແຂ່ງຂັນຄັ້ງນີ້ ກໍເພື່ອ

ອ່ານຕໍ່ໜ້າ 11

...ໃນລະດັບສູງ.

# ຄມສ...

ເປັນການສະເຫຼີມສະຫຼອງວັນແມ່ນ້ຳຂອງ 5 ເມສາ ແລະກອງປະຊຸມສຸດຍອດ ຄມສ ຄັ້ງທີ 3 ຂອງນາຍົກລັດຖະມົນຕີປະເທດລຸ່ມແມ່ນ້ຳຂອງ ແລະເປັນການເພີ່ມທະວີຄວາມເຂົ້າໃຈກ່ຽວກັບຄວາມສຳຄັນຂອງແມ່ນ້ຳຂອງຕໍ່ຊຸມຊົນ ຊຶ່ງການແຂ່ງຂັນດັ່ງກ່າວຈັດ ຂຶ້ນເປັນຄັ້ງທຳອິດຖັດຈາກການປະກວດແຂ່ງຂັນຮູບພາບ ແລະກຳນົດສົ່ງເລີ່ມແຕ່ມື້ນີ້ເປັນຕົ້ນໄປຈົນເຖິງມື້ປິດຮັບໃນວັນທີ 15 ມີນາ 2018 ແລະຈະປະກາດຜົນໃນທ້າຍເດືອນມີນາດ້ວຍຄວາມຍາວບໍ່ເກີນ 60 ຄຳສຳນວນ...

ເບິ່ງຂໍ້ມູນເພີ່ມເຕີມໄດ້ທີ່ www.mrcmekong.org/news-and-events/event/mrcstorycompetition 2018. ຫຼື ສົ່ງບົດເລື່ອງຂອງທ່ານໄປຍັງ E-mail: writingcontest@mrcmekong.org.